ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ
NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283

# ນັກຮຽນສະຫະພັນ ລັດເຊຍ ເຂົ້າຢ້ຽມຊົມຫ້ອງວາງສະແດງ ທຫລ

ໃນວັນທີ 15 ກຸມພາ 2022 ຜ່ານມານີ້, ທ່ານ ນ ບົວ ທອງ ພຸດທະວົງ ວ່າການຫົວໜ້າພະແນກ ຫ້ອງສະໝຸດ ແລະ ພິພິທະພັນ ທຫລ ຕ່າງໜ້າຄະນະຫ້ອງການ ທຫລ ພ້ອມດ້ວຍຄະນະໄດ້ຕ້ອນຮັບການເຂົ້າມາຢ້ຽມຊົມຫໍພິພິທະພັນ ທຫລ ຂອງຄະນະນັກຮຽນຊັ້ນມັດທະຍົມຕອນປາຍ ຈຳນວນ 09 ທ່ານ ຈາກສະຖານເອກອັກຄະລັດຖະທູດສະຫະພັນ ລັດເຊຍ ທີ່ນະຄອນຫຼວງວຽງຈັນ, ນໍາພາໂດຍທ່ານ Ms. L. Kachurina.



ໃນໂອກາດເຂົ້າຢ້ຽມຊົມຫ້ອງວ່າງສະແດງມູນເຊື້ອຂອງ ທຫລ ແລະ ທັດສະນະສຶກສາ ແມ່ນເພື່ອເປັນການສ້າງຄວາມຮັບຮູ້ຄວາມເຂົ້າໃຈທີ່ຖືກຕ້ອງໃຫ້ແກ່ນັກຮຽນຕ່າງປະເທດໄດ້ຮັບຮູ້ກ່ຽວກັບຕົ້ນກໍາເນີດ, ປະ ຫວັດ ແລະ ຄວາມເປັນມາກ່ຽວກັບການສ້າງຕັ້ງການເຕີບໃຫ່ຍຂະຫຍາຍຕົວຂອງລະບົບທະນາຄານ ແລະ ເງິນກີບລາວໃນແຕ່ລະໄລຍະ. ເຊິ່ງການເຂົ້າທັດສະນະສຶກສາໃນເທື່ອນີ້, ແມ່ນເປັນສ່ວນໜຶ່ງທີ່ຕິດພັນກັບໂຄງ ການຫຼັກສູດ, ການຮຽນ-ການສອນ ຂອງນັກສຶກສາດັ່ງກ່າວ.

#ຂ່າວ ແລະ ພາບໂດຍ: ທ ສົມພິດ ທໍາມະວົງ

*ຢູ່ເມືອງໃຊ້ເງິນກີບລາວ*